ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ນາຍົກລັດຖະມົນຕີ

ເລກທີ 62 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 13.11.2015

# ຄຳສັ່ງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດ.

**ເຖິງ: - ບັນດາທ່ານລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການທຽບເທົ່າ ຂັ້ນສູນກາງ;**

**- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ປະຊາຊົນລາວບັນດາເຜົ່າ, ຊາວຕ່າງປະເທດ, ຫົວໜ່ວຍທຸລະກິດການຜະລິດ ແລະ ການບໍລິການ, ໂຄງການທຸກປະເພດ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃນຂອບເຂດທົ່ວປະເທດ.**

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;

- ອີງຕາມ ແຈ້ງການ ສະບັບເລກທີ 912/ຫລບ.ກລຂ, ລົງວັນທີ 05 ມິຖຸນາ 2015 ຂອງຫ້ອງວ່າການລັດຖະບານ;

ເນື່ອງຈາກປັດຈຸບັນ, ຄົນຕ່າງປະເທດທີ່ເຂົ້າມາເຄື່ອນໄຫວແບບບໍ່ຖືກຕ້ອງຢູ່ປະເທດເຮົາ ແມ່ນຍັງມີຈຳນວນຫຼາຍ ແລະ ເພີ່ມຂຶ້ນ ເຮັດໃຫ້ເກີດຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ບໍ່ສາມາດຄຸ້ມຄອງໄດ້.

ເພື່ອເຮັດໃຫ້ບັນຫາດັ່ງກ່າວໄດ້ຮັບການແກ້ໄຂໃນທາງທີ່ດີຂຶ້ນ, ແນໃສ່ເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງແຮງງານເຄື່ອນຍ້າຍ, ສ້າງຄວາມກຽມພ້ອມ ໃນການເຂົ້າເປັນປະຊາຄົມເສດຖະກິດອາຊຽນໃນທ້າຍປີ 2015, ລັດຖະບານຈຶ່ງມອບໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຂະແໜງປ້ອງກັນຄວາມສະຫງົບ ຮ່ວມກັນດຳເນີນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດ ທີ່ຍັງເຄື່ອນໄຫວແບບບໍ່ຖືກຕ້ອງຢູ່ ສປປ ລາວ, ພ້ອມດຽວກັນນັ້ນ ກໍເພື່ອເຮັດໃຫ້ທຸກຄົນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງອຳນວຍຄວາມສະດວກ ແລະ ເຂົ້າຮ່ວມຢ່າງຕັ້ງໜ້າໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດດັ່ງກ່າວ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ

1. ໃຫ້ບັນດາທ່ານລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການທຽບເທົ່າ ຂັ້ນສູນກາງ ທີ່ກ່ຽວພັນກັບການເຄື່ອນໄຫວຂອງຄົນຕ່າງປະເທດຢູ່ ສປປ ລາວ ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກດ້ານຕ່າງໆ ຕາມພາລະບົດບາດຂອງຂະແໜງການຕົນ;

2. ໃຫ້ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ ແລະ ເຈົ້າເມືອງ ຊີ້ນຳ ແລະ ອຳນວຍຄວາມສະດວກໃຫ້ແກ່ຂະແໜງ ຮສສ ແລະ ປກສ ຂັ້ນຂອງຕົນ ໃນການຈັດຕັ້ງປະຕິບັດຕາມແຜນການທີ່ໄດ້ກຳນົດໄວ້, ພ້ອມດຽວກັນນັ້ນ ກໍໃຫ້ອອກຄຳສັ່ງແນະນຳເຖິງປະຊາຊົນບັນດາເຜົ່າ, ອົງການຈັດຕັ້ງທຸກພາກສ່ວນ ພາຍໃນແຂວງ, ເມືອງ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ (ຂພສ) ຂອງຕົນ ເພື່ອໃຫ້ເຂົ້າຮ່ວມຂະບວນການແກ້ໄຂບັນຫາດັ່ງກ່າວ ດ້ວຍຄວາມຮັບຜິດຊອບສູງ;

3. ໃຫ້ອົງການປົກຄອງຂັ້ນບ້ານ, ຄະນະບໍລິຫານ ຂພສ ເປັນເຈົ້າການໃນການນຳເອົາເອກະສານ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງ ລວມທັງຈຸດປະສົງຂອງການແກ້ໄຂບັນຫາດັ່ງກ່າວ ເຜີຍແຜ່ໃຫ້ແກ່ປະຊາຊົນ, ຄົນຕ່າງປະເທດທີ່ມາພັກພາອາໄສ, ເຄື່ອນໄຫວຢູ່ໃນຂອບເຂດພື້ນທີ່ຂອງຕົນ ແລະ ຊຸກຍູ້ຕິດຕາມພວກກ່ຽວ ພ້ອມດຽວກັນນັ້ນ ກໍເຮັດໜ້າທີ່ໃນການກວດກາ, ຕິດຕາມຄົນຕ່າງປະເທດ ທີ່ໄດ້ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃນການປັບປຸງສະຖານະພາບ ແລະ ການຊຳລະສະສາງ. ສ່ວນຜູ້ທີ່ບໍ່ມາອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ແລະ ຜູ້ທີ່ເຂົ້າມາໃໝ່ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ. ພາຍຫຼັງສິ້ນສຸດໄລຍະການດຳເນີນການແກ້ໄຂບັນຫາໃນຄັ້ງນີ້ແລ້ວ ຖ້າພົບວ່າຍັງມີຄົນຕ່າງປະເທດ ເຄື່ອນໄຫວແບບບໍ່ຖືກຕ້ອງຢູ່ບ່ອນໃດ, ບ່ອນນັ້ນຕ້ອງມີຄວາມຮັບຜິດຊອບຕໍ່ລະບຽບກົດໝາຍຢ່າງເຂັ້ມງວດ;

4. ໃຫ້ບັນດາຫົວໜ່ວຍທຸລະກິດການຜະລິດ ແລະ ການບໍລິການ, ໂຄງການຕ່າງໆ, ຂພສ ລວມທັງບຸກຄົນທີ່ມີການນຳໃຊ້ແຮງງານຕ່າງປະເທດ, ຜູ້ໃຫ້ເຊົ່າສະຖານທີ່ເພື່ອດຳເນີນການຜະລິດ, ຄ້າຂາຍ, ໃຫ້ເຊົ່າທີ່ພັກອາໄສ, ໃຫ້ເຊົ່າທະບຽນວິສາຫະກິດ ແລະ ອື່ນໆ ກວດກາເບິ່ງວ່າ ຄົນຕ່າງປະເທດທີ່ຕົນນຳໃຊ້, ອະນຸຍາດໃຫ້ມາລົງທຶນ ແລະ ໃຫ້ເຊົ່ານັ້ນ ແມ່ນເປັນຜູ້ທີ່ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການແລ້ວ ຫຼື ບໍ່ ຖ້າຍັງບໍ່ຖືກຕ້ອງ ກໍໃຫ້ຮີບຮ້ອນ ຫຼື ນຳພາເຂົາເຈົ້າໄປຂຶ້ນທະບຽນ ແລະ ຂໍອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ເພື່ອຂໍເວລາໃນການປັບສະຖານະພາບ ໃຫ້ເປັນຜູ້ເຄື່ອນໄຫວໄດ້ຢ່າງຖືກຕ້ອງ ຫຼື ຂໍເວລາເພື່ອການຊຳລະສະສາງ ກ່ອນຢຸດຕິການເຄື່ອນໄຫວແບບບໍ່ຖືກຕ້ອງດັ່ງກ່າວ. ເງື່ອນໄຂຂອງຜູ້ທີ່ສາມາດປັບສະຖານະພາບໄດ້ ແລະ ຜູ້ທີ່ຈະໄດ້ຮັບອະນຸຍາດເພື່ອການຊຳລະສະສາງ ມີດັ່ງນີ້:

4.1. **ເງື່ອນໄຂສຳລັບຜູ້ປັບສະຖານະພາບ:**

ຄົນຕ່າງປະເທດ ຜູ້ທີ່ສາມາດຂໍອະນຸຍາດເພື່ອປັບສະຖານະພາບ ມີດັ່ງນີ້:

- ຜູ້ອອກແຮງງານທີ່ເຮັດວຽກນຳບັນດາຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ, ໂຄງການທຸກປະເພດ, ຂພສ ຫຼື ຜູ້ອອກແຮງງານທີ່ມີຜູ້ໃຊ້ແຮງງານມາຮັບປະກັນ ເພື່ອຈະຮັບເອົາເຂົ້າເຮັດວຽກນຳຕົນ;

- ຜູ້ລົງທຶນຄ້າຂາຍ, ໃຫ້ການບໍລິການ ຫຼື ດຳເນີນທຸລະກິດທຸກປະເພດ ທີ່ບໍ່ຂັດກັບລະບຽບການຂອງຂະແໜງການຄ້າ ແລະ ການລົງທຶນ ໂດຍສະເພາະແມ່ນລະບຽບການກ່ຽວກັບການປະກອບອາຊີບທີ່ສະຫງວນໄວ້ໃຫ້ແກ່ພົນລະເມືອງລາວເທົ່ານັ້ນ;

- ຜູ້ທີ່ໄດ້ເຂົ້າມາປະກອບການຢູ່ໃນ ຂພສ ທີ່ມີເອກະສານຢັ້ງຢືນຢ່າງຖືກຕ້ອງ ແລະ ຄົບຖ້ວນ.

4.2. **ຜູ້ທີ່ຈະໄດ້ຮັບອະນຸຍາດໃຫ້ຊຳລະສະສາງ:**

ຄົນຕ່າງປະເທດທີ່ຈະໄດ້ຮັບອະນຸຍາດໃຫ້ດຳເນີນການຊຳລະສະສາງ ເພື່ອຍຸດຕິການເຄື່ອນໄຫວ ມີດັ່ງນີ້:

- ເປັນຜູ້ຫິ້ວ, ຫາບ, ເອົາເຄື່ອງໃສ່ລໍ້ ຫຼື ລົດ ເລາະຂາຍ, ລ້ຽງສັດບົກ ຫຼື ສັດນ້ຳ, ໃຫ້ບໍລິການເສີມຄວາມງາມ ເຊັ່ນ: ຕັດເລັບ, ຕັດຜົມ, ບໍລິການລ້າງລົດ, ເກັບ ແລະ ຊື້ວັດຖຸອຸປະກອນທີ່ໃຊ້ແລ້ວ, ຂາຍຊີ້ນ, ປາ ຫຼື ອາຫານປະເພດຕ່າງໆ, ຂາຍຜັກ ແລະ ໝາກໄມ້, ຕັ້ງຮ້ານກາເຟ, ຮ້ານກິນດື່ມຄາຣາໂອເກະ, ຮ້ານເກມ, ອອກເງິນກູ້, ຂາຍເຄື່ອງຜ່ອນ ຫຼື ເຮັດວຽກແບບບໍ່ມີຜູ້ໃຊ້ແຮງງານ, ຫາຮັບຈ້າງທົ່ວໄປ ແລະ ອື່ນໆທີ່ບໍ່ຖືກຕ້ອງຕາມກົດໝາຍ;

- ຜູ້ລົງທຶນຄ້າຂາຍ, ໃຫ້ການບໍລິການ ຫຼື ດຳເນີນທຸລະກິດທຸກປະເພດ ທີ່ຂັດກັບລະບຽບການຂອງຂະແໜງການຄ້າ ແລະ ການລົງທຶນ ໂດຍສະເພາະແມ່ນລະບຽບການກ່ຽວກັບ ການປະກອບອາຊີບທີ່ສະຫງວນໄວ້ໃຫ້ແກ່ພົນລະເມືອງລາວເທົ່ານັ້ນ;

- ຜູ້ທີ່ເຂົ້າມາອອກແຮງງານ, ປະກອບການຢູ່ໃນ ຂພສ ທີ່ບໍ່ມີເອກະສານຢັ້ງຢືນການເຂົ້າເມືອງທີ່ຖືກຕ້ອງ ແລະ ຄົບຖ້ວນ.

5. ໃຫ້ສອງຂະແໜງການແກ້ໄຂບັນຫາຄັ້ງນີ້ ນຳໃຊ້ງົບປະມານທີ່ເກັບໄດ້ຈາກການອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ເຂົ້າໃນກິດຈະກຳຕ່າງໆຂອງການຈັດຕັ້ງປະຕິບັດແຜນໃນຄັ້ງນີ້, ການນຳໃຊ້ ຫຼື ຈ່າຍເງິນເຂົ້າໃນແຕ່ລະກິດຈະກຳ ແມ່ນໃຫ້ອີງໃສ່ລະບຽບການທາງດ້ານການເງິນ;

6. ໃຫ້ດຳເນີນມາດຕະການຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ ຕໍ່ບຸກຄົນ ແລະ ການຈັດຕັ້ງ ທີ່ຈົງໃຈບໍ່ເຂົ້າຮ່ວມການແກ້ໄຂບັນຫາໃນຄັ້ງນີ້ ຫຼື ຕໍ່ຜູ້ໃຫ້ການຊ່ວຍເຫຼືອ, ປົດບັງ ແລະ ຊຸກເຊື່ອງຄົນຕ່າງປະເທດ ເພື່ອຫຼົບຫຼີກການມາຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວຄັ້ງນີ້. ຫຼັງຈາກສິ້ນສຸດກຳນົດເວລາທີ່ອະນຸຍາດໃຫ້ແລ້ວ, ແຕ່ຄົນຕ່າງປະເທດຫາກຍັງບໍ່ປັບປຸງຕົນເອງ, ຜູ້ໃຫ້ເຊົ່າກໍຍັງບໍ່ຢຸດຕິການໃຫ້ເຊົ່າແບບບໍ່ຖືກຕ້ອງຢູ່ນັ້ນ ແມ່ນໃຫ້ມີມາດຕະການທາງວິໄນ ແລະ ດຳເນີນຄະດີ ຕາມລະບຽບກົດໝາຍ;

7. ໃຫ້ຄະນະນຳທຸກຂັ້ນຂອງສອງຂະແໜງການ ຈັດຕັ້ງການເຜີຍແຜ່ໂຄສະນາ, ສ້າງຄວາມເຂົ້າໃຈໃຫ້ທຸກພາກສ່ວນອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕໍ່ຄວາມຈຳເປັນໃນການຈັດຕັ້ງປະຕິບັດຕາມແຜນດັ່ງກ່າວ ແລະ ໃຫ້ກຳນົດກົນໄກການຕິດຕາມ, ຊີ້ນຳຢ່າງໃກ້ຊິດ ພ້ອມທັງໃຫ້ມີການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້ ຢ່າງເປັນປະຈຳ ແລະ ໃຫ້ລາຍງານຕໍ່ຫ້ອງວ່າການລັດຖະບານ ເປັນແຕ່ລະໄລຍະ;

8. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ